rfa | ວິທຍຸເອເຊັຽເສຣີ

# ບັນຫາ ຄົນງານ ໃນເຂດເສຖກິຈ ສະເພາະບໍ່ເຕັນ

**ສຸພັດຕາ**
2022.07.15



*ເຂດເສຖກິຈ ສະເພາະບໍ່ເຕັນ ແຂວງຫຼວງນໍ້າທາ, ເດືອນມິຖຸນາ ປີ 2022.*

ກະຊວງແຮງງານ ແລະ ສວັດດີການສັງຄົມຂອງລາວ ກຳລັງແກ້ໄຂບັນຫາ ຄົນງານທັງພາຍໃນ ແລະຕ່າງປະເທດ ທີ່ເຮັດວຽກຢູ່ພາຍໃນ ເຂດເສຖກິຈສະເພາະບໍ່ເຕັນ ແຂວງຫຼວງນໍ້າທາ ໂດຍຈະຂຶ້ນທະບຽນແຮງງານ ແລະ ອອກບັດອະນຸຍາດເຮັດວຽກ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຂອງລາວ ເພື່ອປົກປ້ອງສິດຜົລປໂຍດ ແລະປ້ອງກັນເຫດອາຊຍາກັມ ທີ່ອາຈເກີດຂຶ້ນໄດ້ທຸກເມື່ອ.

ດັ່ງເຈົ້າໜ້າທີ່ ຜແນກແຮງງານ ແລະ ສວັດດີການສັງຄົມ ແຂວງຫຼວງນໍ້າທາ ທ່ານນຶ່ງ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ວັນທີ 15 ກໍຣະກະດາ ນີ້ວ່າ:

*"ເພາະວ່າ ເຮົາຈະລົງໄປເກັບກຳສະຖິຕິວ່າ ຢູ່ບັນດາຫົວໜ່ວຍ ມີແຮງງານໃດ ເຮັດວຽກຈັກຄົນເນາະ ລະກໍຕ້ອງໄດ້ມາຂຶ້ນທະບຽນ ເຮັດໃບຜ່ານເມືອງ ແລະກໍໄປອອກ ອັນນ່າບັດອະນຸຍາດເຮັດວຽກ ສະເພາະແຮງງານລາວ ມັນຈະຂຶ້ນກັບພວກ ປສກ ເນາະ ຈະຂຶ້ນທະບຽນ ເປັນເດືອນ ຫຼືວ່າ 3 ເດືອນຊີນ່າ."*

ເມື່ອວັນທີ່ 13 ກໍຣະກະດາ ທີ່ຜ່ານມາ ກະຊວງແຮງງານ ແລະ ສວັດດີການສັງຄົມຂອງລາວ ໄດ້ເຊັນຂໍ້ຕົກລົງ ກັບຄະນະບໍຣິຫານງານ ເຂດເສຖກິຈສະເພາະບໍ່ເຕັນ ແຂວງຫຼວງນໍ້າທາ ເພື່ອແກ້ໄຂບັນຫາຄົນງານ ທັງພາຍໃນແລະຕ່າງປະເທດ ທີ່ເຮັດວຽກຢູ່ພາຍໃນເສຖກິຈດັ່ງກ່າວ ທີ່ເຂົ້າມາເຮັດວຽກບໍ່ຖືກຕ້ອງ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍ ຂອງລາວ.

ໂດຍການເຊັນຂໍ້ຕົກລົງດັ່ງກ່າວນີ້ ແມ່ນເຊັນໂດຍ ທ່ານ ພົງໄຊສັກ ອິນທາລາດ ຮອງຣັຖມົນຕຣີ ກະຊວງແຮງງານ ແລະສ ວັດດີການສັງຄົມ ແລະ ດຣ. ລານ ເຈຍເຫວີ່ຍ (Lan Jia Wei) ປະທານຄະນະບໍຣິຫານງານ ເຂດເສຖກິຈສະເພາະບໍ່ເຕັນ ແຂວງຫຼວງນໍ້າທາ ເຊິ່ງຈຸດປະສົງສຳຄັນ ໃນການເຊັນຂໍ້ຕົກລົງໃນຄັ້ງນີ້ ແມ່ນເພື່ອໃຫ້ເຂດເສຖກິຈ ສະເພາະບໍ່ເຕັນ ປະຕິບັດຕາມ ກົດໝາຍແຮງງານຂອງລາວ, ອີງຕາມການຣາຍງານ ຂອງໜັງສືພິມ ວຽງຈັນທາມສ໌.

ຈີນເຖິງປັດຈຸບັນ ໃນເຂດເສຖກິຈສະເພາະບໍ່ເຕັນ ມີບັນຫາຫຼາຍ ຍ້ອນຄົນຈີນ ລັກລອບເຂົ້າມາເຮັດວຽກ ໃນເຂດດັ່ງກ່າວ ຫຼາຍ.

ດັ່ງຄົນລາວຜູ້ນຶ່ງ ໃນເມືອງຫຼວງນໍ້າທາ ແຂວງຫຼວງນໍ້າທາ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ວັນທີ 15 ກໍຣະກະດາ ນີ້ວ່າ:

*"ຄືຈີນເຂົ້າມາ ມັນກະມີທັງຜົລດີແດ່ ມີຜົລເສັຍແດ່ຕາມມາພັ້ນນ່າ ຄວາມຈະເລີນໄປໃສ ກະຄວາມວຸ້ນວາຍມາບ່ອນພັ້ນແຫຼະ ເຂົາຄົນງານຫຼາຍເນາະ ມັນແບບອັນນ່າ ຄົນລັກລອບເຂົ້າຫຼາຍເນາະ ບໍ່ຮູ້ວ່າ ຣັຖບານຂະເຈົ້າມີມາຕການຫຍັງຄຸ້ມຄອງ ເຂົາແນວໃດ."*

ຂະນະທີ່ ຊາວລາວອີກທ່ານນຶ່ງ ກ່າວວ່າ ໄລຍະຜ່ານມາ ກໍເຄີຍເກີດເຫດການ ກຸ່ມຄົນຈີນຕີກັນ, ຍິງກັນ ຫຼື ປະທ້ວງນາຍຈ້າງ ແຕ່ເຫດການເຫຼົ່ານັ້ນ ກໍບໍ່ເຄີຍຖືກເປີດເຜີຍ ໃຫ້ສັງຄົມຮັບຮູ້ ວ່າກຸ່ມຄົນຈີນເຫຼົ່ານັ້ນ ເຂົ້າມາດຳເນີນ ທຸຣະກິຈຫຍັງ ຫຼື ເຮັດວຽກນຳບໍຣິສັດໃດ ເຊິ່ງເຮັດໃຫ້ປະເທດລາວ ຂາດຄວາມໜ້າເຊື່ອຖືໃນການລົງທຶນ ແລະສ້າງຄວາມແຕກຕື່ນຕົກໃຈ ໃຫ້ກັບຄົນລາວນຳດ້ວຍ.

ເພື່ອຫຼຸດຜ່ອນບັນຫານີ້ ບໍ່ວ່າຈະເປັນຄົນປະເທດໃດກໍຕາມ ທີ່ເຂົ້າມາດຳເນີນທຸຣະກິຈ ຫຼືເຮັດວຽກເປັນກັມມະກອນໃນລາວ ທັງແບບໄລຍະສັ້ນ, ໄລຍະຍາວ ກໍຄວນຈະຂຶ້ນທະບຽນແຮງງານ ແລະອອກບັດອະນຸຍາດ ໃຫ້ຖືກຕ້ອງຕາມລະບຽບ ກົດໝາຍ ເພາະທາງການລາວ ມີໜ້າທີ່ປົກປ້ອງ ແລະສ້າງຄວາມປອດພັຍຕໍ່ຊີວິຕ ແລະຊັບສິນຂອງຄົນໃນປະເທດໃຫ້ທີ່ສຸດ.

ດັ່ງຄົນລາວ ຜູ້ນຶ່ງ ໃນນະຄອນຫຼວງວຽງຈັນ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ວັນທີ 15 ກໍຣະກະດາ ນີ້ວ່າ:

*"ຢູ່ບ້ານເຮົາ ມັນຕ້ອງຢູ່ພາຍໃຕ້ກົດໝາຍ ຂອງລາວເຮົາ ອັນນີ້ເວົ້າມາແລ້ວ ບ້ານເຮົາມັນກະບໍ່ມີຄວາມສະຫງົບ ປອດພັຍ ແຫຼະເຮັດແບບນີ້ນ່າ ຢາກເຮັດຫຍັງກະເຮັດນີ້ ເວົ້າແທ້ແລ້ວມັນກະຜິດໃດ໋ ເຈົ້າໜ້າທີ່ເຮົາກະອ່ອນຢູ່ ເຣື່ອງການປະຕິບັດ ໜ້າທີ່."*

ການຂຶ້ນທະບຽນແຮງງານ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຍັງຈະຊ່ອຍໃຫ້ຄົນງານເຫຼົ່ານັ້ນ ໄດ້ຮັບການຄຸ້ມຄອງ ຈາກທາງການລາວນຳດ້ວຍ ຫາກຄົນງານເຫຼົ່ານັ້ນ ໄດ້ຮັບຄວາມເຈັບເປັນ ຫຼືເກີດອຸບັດຕິເຫດ ຈຳເປັນຕ້ອງເຂົ້າປິ່ນປົວ ໃນໂຮງໝໍ ກໍຈະໄດ້ຮັບການຄຸ້ມຄອງ ຕາມກົດໝາຍຂອງລາວ ທັງໝົດນີ້ ກໍເພື່ອປົກປັກສິດຜົລປໂຍດ ຂອງຄົນງານລາວ ແລະ

ຕ່າງປະເທດ ເຊິ່ງຫາກຄົນງານຕ່າງປະເທດ ທີ່ຂຶ້ນທະບຽນຖືກຕ້ອງແລ້ວ ແລະເຂົ້າເປັນສະມາຊິກ ຂອງປະກັນສັງຄົມແຫ່ງຊາດລາວ ກໍຈະໄດ້ຮັບສິດພິເສດຕ່າງໆ ຕາມກົດໝາຍຂອງລາວ ເຊັ່ນ: ເງິນອຸດໜູນບໍານານ, ອຸດໜູນປ່ອຍການ, ອຸດໜູນປິ່ນປົວສຸຂພາບ, ເງິນທົດແທນການຂາດລາຍໄດ້ ແລະອື່ນໆ.

ດັ່ງເຈົ້າໜ້າທີ່ ກະຊວງແຮງງານ ແລະສວັດດີການສັງຄົມ ທ່ານນຶ່ງ ກ່າວຕໍ່ວິທຍຸເອເຊັຽເສຣີ ໃນມື້ວັນທີ 15 ກໍຣະກະດາ ນີ້ວ່າ:

*"ເບິ່ງສະເພາະຄົນລາວ ກະຊິບໍ່ມີບັນຫາ ຫັ້ນແຫຼະເນາະ ຄົນລາວກະເຂົ້າສັງຄົມຕາມລະບຽບ ສໍາລັບຄົນຕ່າງປະເທດ ກະມີແຕ່ເວົ້າເຣື່ອງ ສັນຍາແຮງງານກ່ອນເນາະ ພາຍຫຼັງທີ່ ມີການຈ່າຍເງິນສົມທົບ ກະໄດ້ຮັບອຸດໜູນ ຫຼາຍປະເພດການອຸດໜູນຫັ້ນ."*

ຢ່າງໃດກໍຕາມ ການຂຶ້ນທະບຽນຄົນງານ ຕ່າງປະເທດໃນລາວນີ້ ຍັງມີຄວາມຫຍຸ້ງຍາກ ແລະທ້າທາຍຫຼາຍສົມຄວນ ຍ້ອນການກວດກາ ຄົນງານຕ່າງປະເທດໃນລາວ ບໍ່ໄດ້ຮັບການເອົາໃຈໃສ່ ແລະບໍ່ໄດ້ຮັບຄວາມຮ່ວມມື ເທົ່າທີ່ຄວນ ທັງຈາກໜ່ວຍງານພັກ-ຣັຖ ຢູ່ລະດັບທ້ອງຖິ່ນ ກັບຫົວໜ່ວຍທຸຣະກິຈ ແລະ ລະຫວ່າງເຈົ້າໜ້າທີ່ຣັຖ ກັບຣັຖບໍາກັນເອງ ທີ່ບໍ່ພົວພັນປະສານງານກັນຢ່າງມີ ປະສິທທິພາບ ຈຶ່ງເຮັດໃຫ້ວຽກງານ ການຂຶ້ນທະບຽນ ຄົນງານເກີດຄວາມຊັກຊ້າ.